# ການປູກເຫັດເຟືອງ ແບບກອງເຕ້ຍ

## ຄຳນຳ

ປະຈຸບັນການປູກເຫັດເຟືອງແບບກອງເຕ້ຍ ກຳລັງເປັນທີ່ນິຍົມກັນຫຼາຍ. ເພາະວິທີການແບບນີ້ຊ່ວຍປະຢັດເຟືອງ ແລະ ບໍ່ຈຳເປັນຕ້ອງໃຊ້ຕໍເຟືອງກໍ່ໄດ້ ຈຶ່ງສາມາດປູກເຫັດໄດ້ທຸກລະດູການ.

## ອຸປະກອນທີ່ໃຊ້ໃນການປູກເຫັດ

### 1. ວັດສະດຸ

ທີ່ໃຊ້ໃນການປູກເຫັດອາດຈະໃຊ້ເສດເຟືອງ. ຜັກຕົບແຫ້ງ ແລະ ໃບກ້ວຍແຫ້ງປູກກໍ່ໄດ້.

### 2. ອາຫານເສີມ

ນັບວ່າມີຄວາມສຳຄັນຕໍ່ການປູກເຫັດເຟືອງແບບກອງເຕ້ຍ ເພາະວັດສະດຸທີ່ໃຊ້ໃນການປູກເຫັດມີທາດອາຫານນ້ອຍກວ່າຕໍເຟືອງຈຶ່ງຈຳເປັນຕ້ອງເພີ່ມອາຫານເສີມໃຫ້ແກ່ໜານເຫັດ. **ອາຫານທີ່ໃຊ້ປະກອບດ້ວຍແກ່ນຝ້າຍໃສ່ມຸ່ນ ຂີ້ງົວ ຫຼື ຂີ້ຄວາຍແຫ້ງມາປະສົມກັບຂີ້ແກບ 1 / 1 ເອົາປະສົມເຂົ້າກັນ** ແລ້ວຫົດນ້ຳໃຫ້ຊຸ່ມສະໝ່ຳສະເໝີ ບົ່ມໄວ້ 1 ຄືນ ເພາະອາຫານພວກນີ້ ຈະເພີ່ມຜົນຜະລິດໃຫ້ສູງ.



ຮູບ: ອາຫານເສີມທີ່ປະສົມແລ້ວ

### 3. ແບບພິມໃຊ້ຕ້ອຍໄມ້ ຫຼື ກະບະໄມ້

ນັບວ່າມີຄວາມສຳຄັນຫຼາຍເພື່ອໃຊ້ສຳລັບອັດວັດສະດຸທີ່ໃຊ້ປູກໃຫ້ຢູ່ໃນຮູບໜານໄດ້. ແບບພິມໄມ້ທີ່ນິຍົມເປັນຮູບສີ່ລ່ຽມຄາງໝູເຊິ່ງສາມາດເຮັດໄດ້ດັ່ງນີ້ :

- ລວງກວ້າງ ເທິງ 35 ຊມ
- ລວງກວ້າງລຸ່ມ 40 ຊມ
- ສູງ 40 ຊມ
- ຍາວ 1.20 ມ




ຮູບ: ໄມ້ແບບສຳລັບປູກເຫັດເຟືອງ

### 4. ເຊື້ອເຫັດເຟືອງ

ຄວນເປັນເຊື້ອເຫັດພັນທີ່ດີໃຫ້ຜົນຜະລິດສູງ ແລະ ເຊື້ອເຫັດບໍ່ຄວນແກ່ ແລະ ອ່ອນເກີນໄປ.




ຮູບ: ຖົງຫໍ່ເຊື້ອເຫັດເຟືອງ

### 5. ບົວຫົດນ້ຳ

ຄວນມີເພື່ອໃຫ້ຄວາມຊຸ່ມຂອງໜານໄດ້ສະໝ່ຳສະເໝີ



### 6. ແຜ່ນຢາງປົກຄຸມໜານເຫັດ

ເພື່ອຊ່ວຍຮັກສາຄວາມຊຸ່ມ ແລະ ອຸນນະພູມໃນໜານປູກເຫັດໃຫ້ເໝາະຕໍ່ການຈະເລີນເຕີບໂຕຂອງເຫັດເຟືອງ.

### 7. ໄມ້ໄຜ່ ຫຼື ຈ່າມເຟືອງ ແລະ ໄພຫຍ້າ

ອາດຈະໃຊ້ຫຍ້າຄາ ຫຼື ເສດເຟືອງກໍ່ໄດ້ເພື່ອຊ່ວຍບັງແສງແດດ ແລະ ເຮັດໃຫ້ນານເຫັດບໍ່ຮ້ອນຫຼາຍເກີນໄປ ໄມ້ສຳລັບກົງໜານເຫັດ ເພື່ອບໍ່ໃຫ້ແຜ່ນຢາງປົກຕິດກັບໜານເຫັດ.

## ຂັ້ນຕອນໃນການປູກເຫັດເຟືອງແບບກອງເຕ້ຍ

### 1. ການຕຽມໜານປູກເຫັດ

ຄວນເລືອກພື້ນທີ່ປັດສະຈາກສັດຕູເຫັດເຊັ່ນ: ມົດ, ປວກ ເມື່ອເລືອກສະຖານທີ່ເໝາະສົມແລ້ວ ໃຫ້ທຳການເສຍຫຍ້າ ແລະ ຂຸດດິນໃນບໍລິເວນທີ່ຈະປູກ.

### 2. ນຳແບບໄມ້ພິມມາຕັ້ງເທິງໜ້າດິນ ແລະ ນຳວັດສະດຸທີ່ໃຊ້ປູກເຊັ່ນ:

ເຟືອງ,ໃບກ້ວຍແຫ້ງທີ່ຜ່ານການແຊ່ນ້ຳປະມານ2 ຊົ່ວໂມງ ແລະ ຊຸ່ມນ້ຳດີແລ້ວໃສ່ລົງໄປໃນແບບໄມ້ແລ້ວໃຊ້ມື

ຄື່ນວັດສະດຸດັ່ງກ່າວໃຫ້ແໜ້ນສະໝ່ຳສະເໝີ ແລະ ມີຄວາມໜາປະມານ 10 — 15 ຊມ. ພ້ອມກັບຂື້ນປຽບ ແລະ ທົດນ້ຳໃຫ້ຊຸ່ມ.



### 3. ນຳອາຫານເສີມເຊັ່ນ:

ແກ່ນຝ້າຍ, ໃສ້ນຸ່ນ, ຂີ້ສັດມາປະສົມກັບນ້ຳໃຫ້ຊຸ່ມໂຮຍເທິງໜານໃຫ້ເປັນແຖວ, ຫ່າງຈາກຂອບໜານປະມານ 1 ຝາມື ຈົນຮອບໜານຈາກນັ້ນຈຶ່ງໂຮຍເຊື້ອເຫັດເຟືອງທັບລົງໄປເທິງອາຫານເສີມ.

### 4. ໃຫ້ນຳເສດເຟືອງ ຫຼື ວັດສະດຸທີ່ໃຊ້ປູກໃຫ້ຊຸ່ມນ້ຳ

ທັບລົງໄປ ແລ້ວຍ້າຍໃຫ້ສະໝ່ຳສະເໝີ ແລະ ມີຄວາມໜາເທົ່າກັບຊັ້ນທຳອິດ.

### 5. ໃນຊັ້ນຕໍ່ໆມາໃຫ້ປະຕິບັດເທົ່າກັບຊັ້ນທີ 1 ແລະ ທີ 2

ການປູກຫັດເຟືອງແບບກອງເຕ້ຍ ຕາມປົກກະຕິປູກກັນປະມານ 3 — 4 ໃນຊັ້ນສຸດທ້າຍໃຫ້ໂຮຍອາຫານເສີມ ແລະ ເຊື້ອເຫັດໃຫ້ທົ່ວທັງຜິວຂອງໜານປູກ.

### 6. ເມື່ອປູກເຫັດເປັນທີ່ຮຽບຮ້ອຍແລ້ວ ໃຫ້ຍົກແບບໄມ້ອອກ

ແລ້ວນຳໄປເຮັດໜານປູກຕໍ່ໆໄປ ຈາກນັ້ນໃຫ້ໃຊ້ໄມ້ກົງປັກໃຫ້ແປະກັບໜານ ແລະ ໃຊ້ແຜ່ນຢາງຄຸມໜານເພື່ອຊ່ວຍຮັກສາຄວາມຊຸ່ມ ແລະ ອຸນນະພູມໃນໜານປູກໃຫ້ເໝາະສົມຕໍ່ການຈະເລີນເຕີບໂຕຂອງເສັ້ນໄຍເຫັດ.

### 7. ການເບິ່ງແຍງຮັກສາ

ໃຫ້ໃຊ້ແຜ່ນຢາງໃສແລ້ວໃຊ້ເຟືອງແຫ້ງປົກກັນແດດກັນລົມອີກຊັ້ນໜຶ່ງ. ແຕ່ຕ້ອງລະວັງໃນ**ວັນທີ** 1 — 3 ຖ້າພາຍໃນໜານຮ້ອນເກີນໄປໃຫ້ເປີດແຜ່ນຢາງເພື່ອລະບາຍຄວາມຮ້ອນ ແລະ ໃຫ້ອາກາດຖ່າຍເທໄດ້ສະດວກຂື້ນ. ບົວລະບັດໄດ້ດີກໍ່ຈະເກັບດອກເຫັດໃນ **ວັນທີ** 8 — 10 . ໂດຍສະເລ່ຍຈະໄດ້ດອກເຫັດປະມານ 1 — 2 **ກິໂລ / ກອງ** ຫຼື 1 ໜານ.

### 8. ການເກັບເຫັດເຟືອງ

ເມື່ອປູກເຫັດແລ້ວ 5 — 7 **ວັນ** ຈະເລີ່ມເຫັນຕຸ່ມສີຂາວນ້ອຍໆເກີດຂື້ນ ແລ້ວ ຈະໃຫຍ່ເປັນດອກເຫັດຕໍ່ໄປ ດອກເຫັດທີ່ເກີດຂື້ນເປັນເຫງົ້າມີທັງດອກອ່ອນ ແລະ ແກ່ເກັບດອກເຫັດ ໂດຍໃຊ້ມືຈັບດອກເຫັດຢ່າງເບົາໆ.



**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການປູກເຫັດເຟືອງ ແບບກອງເຕ້ຍ



ຂຽນໂດຍ: ໜ່ວຍງານສົ່ງເສີມວິຊາຊີບ
ໂທລະສັບ/ແຟກ: (021) 740162

ສະໜັບສະໜູນໂດຍ: ໂຄງການ ສົ່ງເສີມ ກະສິກຳ (LEAP)